**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ

ຫ້ອງການ — ເລກທີ 3100/ຫກ

ຄະນະຮັບຜິດຊອບໂຄງການ — ນະຄອນຫຼວງວຽງຈັນ, ວັນທີ 4 ພ.ຈິກ 2025

## ໜັງສືແຈ້ງເຊີນປະມູນ

**ໂຄງການສ້ອມແປງ ແລະ ຕໍ່ເຕີມຕຶກອາຄານໂຮງສະແດງ, ຫໍພັກນັກຮຽນຂອງວິທະຍາໄລສິລະປະແຫ່ງຊາດ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການສ້ອມແປງ ແລະ ຕໍ່ເຕີມຕຶກອາຄານໂຮງສະແດງ, ຫໍພັກນັກຮຽນຂອງວິທະຍາໄລສິລະປະແຫ່ງຊາດ ສະບັບເລກທີ 923/ວທ, ລົງວັນທີ 29 ຕຸລາ 2025;
- ອີງຕາມ ແຈ້ງການ ແຈ້ງແຜນການລົງທຶນຂອງລັດປະຈຳສົກປີ 2025 ສະບັບເລກທີ 07/ວທ,ລົງວັນທີ 27ມັງກອນ 2025 ແລະ ໃບແຈ້ງໂຕເລກງົບປະມານການລົງທຶນຂອງລັດພາກ 67 ສະບັບເລກທີ 82/ຜກຣ.1, ລົງວັນທີ 27 ມັງກອນ 2025.

1. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ (ບ້ວງທຶນປົກກະຕິ)ແຜນປີ 2025 ໂຄງການສ້ອມແປງ ແລະ ຕໍ່ເຕີມຕຶກອາຄານໂຮງສະ ແດງ, ຫໍພັກນັກຮຽນຂອງວິທະຍາໄລສິລະປະແຫ່ງຊາດ. ສຳລັບໄລຍະເວລາຂອງການຈັດຕັ້ງປະຕິບັດວຽກທັງໝົດ ແມ່ນບໍ່ໃຫ້ກາຍ 3 ປີ ນັບຕັ້ງແຕ່ມື້ອອກໃບສັ່ງວຽກໃຫ້ຈັດຕັ້ງປະຕິບັດຈົນເຖິງມື້ມອບ - ຮັບໂຄງການ;
2. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸທິເໝາະສົມເຂົ້າຍື່ນຊອງປະມູນການສ້ອມແປງ ແລະ ຕໍ່ເຕີມຕຶກອາຄານໂຮງສະແດງ, ຫໍພັກນັກຮຽນຂອງວິທະຍາໄລສິລະປະແຫ່ງຊາດ;
3. ໃນການປະມູນແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ (ສຳເນົາດ້ານຫຼັງມາພ້ອມ) ແລະ ມີໃບອະນຸຍາດດຳເນີນທຸລະກິດທາງດ້ານການກໍ່ສ້າງ, ສ້ອມແປງເຄຫາສະຖານປະຈຳປີ 2025 ແລະ ໃບຢັ້ງຢືນການມອບອາກອນປີ 2024;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກ ການກວດກາບັນຊີແບບຄົບຊຸດ ປະຈຳປີ 2024 ອອກໂດຍກົມສ່ວຍສາອາກອນ (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນ (9,10,11) ຜ່ານມາວົງເງິນບໍ່ຫຼຸດ 5,000,000,000 ກີບ ຂຽນເປັນໂຕໜັງສື (ຫ້າຕື້ກີບ) ແລະ ບັນຊີສຳຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;

6. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນ ໄດ້ນຳຄະນະຮັບຜິດຊອບໂຄງການຢູ່ທີ່ ກົມແຜນການ ແລະ ການຮ່ວມມືສາກົນ(ພະແນກແຜນການ ແລະ ການລົງທຶນ), ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສອບຖາມຂໍ້ມູນໂທ: 020 5624 9151 ນາງ ນິງພອນ ຄຳສອນ, ວິລະສັກ ຄົງສະຫວັນ 020 9634 2242 ການຂາຍຊອງປະມູນເລີ່ມແຕ່ວັນທີ 05 ພະຈິກ 2025 (ຕາມໂມງລັດຖະການ) ໃນລາຄາ 3,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄໍ້າປະກັນການປະມູນດ້ວຍເງິນສົດ, ແຊັກ(ວິຊ້າ) ຫລື ໜັງສືຄໍ້າປະກັນການ ປະມູນຈາກທະນາຄານບໍ່ໃຫ້ຫລຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງຂອງວັນທີ 21 ພະຈິກ 2025 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງຂອງວັນທີ 21 ພະຈິກ 2025 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

ຫົວໜ້າຄະນະຮັບຜິດຊອບໂຄງການ

ຮັກສາການຫົວໜ້າຫ້ອງການ

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ

ຫ້ອງການ

ສຸກສະຫວັນ ສຸລິວົງ